ໃບແຈ້ງຂໍ້ມູນ

ທຸລະກິດຂະໜາດນ້ອຍ

COVERED CALIFORNIA

ທາງເລືອກໃໝ່ສຳລັບການຄຸ້ມຄອງຂອງປະກັນໄພສຸຂະພາບ

ກົດໝາຍ Patient Protection and Affordable Care Act (Affordable Care Act) (ກົດໝາຍວ່າດ້ວຍການປົກປ້ອງຄົນເຈັບແລະການດູແລສຸຂະພາບໃນລາຄາຍ່ອມເຍົາ) ຂອງຣັຖບານກາງໄດ້ຖືກຮັບຮອງຜ່ານໃນປີ 2010 ເພື່ອເພີ້ມຈຳນວນຊາວອາເມລິກັນທີ່ໄດ້ຮັບການຄຸ້ມຄອງຈາກປະກັນໄພສຸຂະພາບ.

ປະຊາກອນອາເມລິກັນເກືອບຮອດເຄິ່ງໜຶ່ງໄດ້ຮັບປະກັນໄພສຸຂະພາບຈາກນາຍຈ້າງຂອງເຂົາເຈົ້າ, ທຸລະກິດຂະໜາດນ້ອຍມີບົດບາດ ສຳຄັນໃນການຊ່ວຍຄຸ້ມຄອງຊາວຄາລິຟໍເນັຍຫຼາຍຂຶ້ນ. ເຈົ້າຂອງທຸລະກິດເກືອບໝົດທຸກຄົນເຂົ້າໃຈເຖິງຂໍ້ໄດ້ປຽບຂອງການສະໜອງ ປະກັນໄພສຸຂະພາບທີ່ມີຄຸນນະພາບສູງໃຫ້ແກ່ພະນັກງານຂອງເຂົາເຈົ້າ. ການສະໜອງການປະກັນໄພສຸຂະພາບຈະຊ່ວຍຊອກເອົາ ແລະຮັກສາພະນັກງານທີ່ເກັ່ງທີ່ສຸດໄວ້ ແລະເຮັດໃຫ້ພວກເຂົາເຈົ້າມີສຸຂະພາບແຂງແຮງຂຶ້ນ, ມີຄວາມສຸກຫຼາຍຂຶ້ນ ແລະເຮັດວຽກໄດ້ດີຂຶ້ນກວ່າເກົ່າ.

Affordable Care Act ໄດ້ສ້າງຂໍ້ກຳນົດຂຶ້ນຫຼາຍຂໍ້ເພື່ອຊຸກຍູ້ໃຫ້ມີນາຍຈ້າງຫຼາຍຄົນເພີ້ມຂຶ້ນທີ່ໃຫ້ການຄຸ້ມຄອງປະກັນໄພແກ່ ພະນັກງານຂອງພວກເຂົາເຈົ້າ. ຂໍ້ກຳນົດເຫຼົ່ານັ້ນລວມມີ ການເຮັດໃຫ້ປະກັນໄພມີລາຄາຍ່ອມເຍົາຂຶ້ນແລະຊື້ໄດ້ງ່າຍຂຶ້ນ. Covered California™ ຈະເປີດຕະຫຼາດປະກັນໄພສຸຂະພາບໃໝ່ພາຍໃນປາຍປີນີ້. ທຸລະກິດຂະໜາດນ້ອຍຈະມີຊ່ອງທາງເຂົ້າເຖິງທາງເລືອກ ປະກັນໄພສຸຂະພາບຢ່າງຫຼາກຫຼາຍແບບດີເລີດ, ທຸກແຜນປະກັນໄພສຸຂະພາບຈະຖືກຈັດການຢູ່ໃນໃບບິນອັນດຽວ ແລະຖືກຈັດການທາງອອນລາຍເທື່ອດຽວ.

ໂຄງການທາງເລືອກດ້ານປະກັນໄພສຸຂະພາບສຳລັບທຸລະກິດຂະໜາດນ້ອຍຂອງ Covered California

ໂຄງການທາງເລືອກດ້ານປະກັນໄພສຸຂະພາບສຳລັບທຸລະກິດຂະໜາດນ້ອຍຂອງ (Small Business Health Options Program: SHOP) ຂອງ Covered California ກຳລັງພັດທະນາຕະຫຼາດປະກັນໄພ ທີ່ມີຮູບແບບພິເສດສຳລັບທຸລະກິດຂະໜາດນ້ອຍທີ່ມີພະນັກງານ 1 ຫາ 50 ຄົນທີ່ມີສິດເໝາະສົມ.

ຕະຫຼາດນີ້ຈະຊ່ວຍໃຫ້ນາຍຈ້າງສາມາດປຽບທຽບແຜນປະກັນໄພສຸຂະພາບທີ່ເໝາະສົມ, ມີການແຂ່ງຂັນກັນຈາກບັນດາບໍລິສັດປະກັນໄພເອກະຊົນຕ່າງໆ. ໂດຍຜ່ານໂຄງການ SHOP ຂອງ Covered California, ທຸລະກິດຂະໜາດນ້ອຍຈະສາມາດສະເໜີແຜນປະກັນໄພ ທີ່ແຕກຕ່າງກັນຕ່າງໆໃຫ້ແກ່ພະນັກງານຂອງເຂົາເຈົ້າໄດ້, ຊຶ່ງເປັນບາງສິ່ງບາງຢ່າງທີ່ທຸລະກິດຂະໜາດນ້ອຍບໍ່ພໍເທົ່າໃດສາມາດເຮັດໄດ້ເທົ່າເຖິງທຸກມື້ນີ້.

ສຳລັບທຸລະກິດທີ່ມີພະນັກງານທີ່ມີສິດເໝາະສົມຈຳນວນ 1 ຫາ 50 ຄົນ, Covered California ແມ່ນຈັດຕາຕະລາງເພື່ອດຳເນີນການເປີດໃຫ້ຈົດຊື່ລົງທະບຽນໂດຍເລີ້ມໃນເດືອນຕຸລາ 2013 ສຳລັບການຄຸ້ມຄອງທີ່ຈະເລີ້ມຂຶ້ນໃນວັນທີ 1 ມີກະຈາ 2014. ໃນປີ 2015, Covered California ຈະເລີ້ມສະເໜີແຜນປະກັນໄພສຸຂະພາບໃຫ້ແກ່ບັນດານາຍຈ້າງທີ່ມີພະນັກງານທີ່ມີສິດເໝາະສົມ 100 ຄົນ ຫຼືໜ້ອຍກວ່ານັ້ນ, ສຳລັບການຄຸ້ມຄອງທີ່ຈະໃຊ້ການໄດ້ໃນວັນທີ 1 ມີກະຈາ 2016. ບັນດານາຍຈ້າງສາມາດລົງທະບຽນໃນໂຄງການ SHOP ຂອງ Covered California ຕະຫຼອດທັງປີ. ບໍ່ຄືກັນກັບຕະຫຼາດ Covered California ສຳລັບບຸກຄົນຕ່າງໆ, ບໍ່ມີໄລຍະການເປີດໃຫ້ຈົດຊື່ລົງທະບຽນທີ່ກຳນົດໄວ້ສຳລັບບັນດາທຸລະກິດຕ່າງໆ, ເຮັດໃຫ້ນາຍຈ້າງມີທາງເລືອກໃນການລົງທະບຽນໂດຍອີງຕາມວັນທີຂອງການຕໍ່ອາຍຸສັນຍາປະກັນໄພປັດຈຸບັນຂອງເຂົາເຈົ້າ ຫຼື ໂດຍວັນທີທີ່ມີຜົນບັງຄັບໃຊ້ອື່ນໆ ຕາມທີ່ເຂົາເຈົ້າເລືອກ.

ເຄຣດິດຈາກພາສີໃຫ້ແກ່ທຸລະກິດຂະໜາດນ້ອຍ

ເຈົ້າຂອງທຸລະກິດຂະໜາດນ້ອຍອາດມີສິດເໝາະສົມໄດ້ຮັບເຄຣດິດຈາກພາສີເພື່ອຊ່ວຍແບ່ງເບົາແທນເງິນປະກອບສ່ວນສົມທົບຈ່າຍຄ່າງວດປະກັນໄພຂອງພະນັກງານ. ມີສອງໄລຍະຂອງເຄຣດິດຈາກພາສີ. ໂດຍເລີ່ມໃນປີ 2010 ຈົນເຖິງປີພາສີ 2013 ຈະມີເຄຣດິດ ຈາກພາສີສຳລັບທຸລະກິດຕ່າງໆ ທີ່ມີພະນັກງານເຮັດວຽກທຽບເທົ່າກັບເຕັມເວລາໜ້ອຍກວ່າ 25 ຄົນທີ່ມີລາຍໄດ້ສະເຫຼີ່ຍປະຈຳປີໜ້ອຍກວ່າ $50,000. ໃນລະຫว่างไลยะทำอิด, ນາຍຈ້າງທີ່ມີສິດເໝາະສົມສາມາດຮັບເອົາເຄຣດິດຈາກພາສີສູງເຖິງ 35 ເປີເຊັນຂອງລາຍຈ່າຍຄ່າງວດປະກັນໄພ (25 ເປີເຊັນສຳລັບອົງການທີ່ບໍ່ເອົາຜົນກຳໄລ).

ໂດຍເລີ່ມໃນປີ 2014, ຈຳນວນເຄຣດິດຈາກພາສີສູງສຸດເພີ້ມຂຶ້ນເຖິງ 50 ເປີເຊັນ (35 ເປີເຊັນສຳລັບອົງການບໍ່ເອົາຜົນກຳໄລ) ແລະມີໃຫ້ເປັນເວລາສູງສຸດສອງປີຕິດຕໍ່ກັນ. ໂດຍທົ່ວໄປແລ້ວ, ທຸລະກິດຕ່າງໆ ທີ່ມີພະນັກງານເຮັດວຽກທຽບເທົ່າເຕັມເວລາ 10 ຄົນ ຫຼື ໜ້ອຍກວ່ານັ້ນ ແລະໄດ້ຮັບຄ່າຈ້າງສະເຫຼີ່ຍປະຈຳປີໜ້ອຍກວ່າ $25,000 ຈະມີສິດໄດ້ຮັບເຄຣດິດສູງທີ່ສຸດ.

ເພື່ອໃຫ້ມີສິດໄດ້ຮັບເຄຣດິດຈາກພາສີໃດໆ, ບັນດານາຍຈ້າງຕ້ອງປະກອບສ່ວນຈ່າຍສົມທົບຢ່າງໜ້ອຍ 50 ເປີເຊັນຂອງຄ່າງວດປະກັນໄພຂອງພະນັກງານ.

ເພື່ອຮຽນຮູ້ຕື່ມກ່ຽວກັບເຄຣດິດຈາກພາສີ, ກະຣຸນາເບິ່ງໃບແຈ້ງຂໍ້ມູນກ່ຽວກັບ “ເຄຣດິດຈາກພາສີຂອງທຸລະກິດຂະໜາດນ້ອຍ” ຂອງພວກເຮົາ ຊຶ່ງມີໃຫ້ທີ່ເວັບໄຊ www.CoveredCA.com.

ປະໂຫຍດຂອງແຜນປະກັນໄພສຸຂະພາບທີ່ນາຍຈ້າງໃຫ້ການອຸດໜຸນ

ແຜນປະກັນໄພສຸຂະພາບທີ່ນາຍຈ້າງໃຫ້ການອຸດໜຸນ ນັ້ນມີຄຸນຄ່າຫຼາຍຍ້ອນເຫດຜົນຫຼາຍຢ່າງ. ຄົນທີ່ໄດ້ຮັບການປະກັນໄພ ແມ່ນຖືກປົກປ້ອງບໍ່ໃຫ້ຖືກກະທົບໂດຍຄ່າໃຊ້ຈ່າຍດ້ານການປິ່ນປົວທີ່ບໍ່ແນ່ນອນ ແລະມີລາຄາສູງ. ເຂົາເຈົ້າຍັງມີແນວໂນ້ມວ່າຈະໄດ້ຮັບການເບິ່ງແຍງສຸຂະພາບທີ່ຈຳເປັນແລະເໝາະສົມຫຼາຍຂຶ້ນ. ປະກັນໄພຄຸ້ມຄອງສາມາດປັບປຸງສຸຂະພາບຂອງຄົນເຮັດວຽກ, ເພາະສະນັ້ນ ພະນັກງານທີ່ມີປະກັນໄພສຸຂະພາບກໍຈະເຈັບເປັນໜ້ອຍລົງ ແລະກໍຈະສາມາດເຮັດວຽກທີ່ມີປະສິດທິພາບໄດ້ດີກວ່າເກົ່າ.

ທຸລະກິດຂະໜາດນ້ອຍຫຼາຍແຫ່ງເລືອກທີ່ຈະສະເໜີປະກັນໄພສຸຂະພາບໃນຖານະເປັນຜົນປະໂຫຍດເພີ່ມເຕີມໃຫ້ແກ່ພະນັກງານ ເພື່ອເປັນການດຶງດູດໃຈ ແລະຮັກສາພະນັກງານທີ່ມີຄຸນນະພາບເອົາໄວ້. ແຜນປະກັນໄພສຸຂະພາບທີ່ນາຍຈ້າງໃຫ້ການອຸດໜຸນ ຍັງສາມາດເປັນທາງເລືອກທີ່ດຶງດູດໃຈໄດ້ເນື່ອງຈາກມີຂໍ້ດີໃນດ້ານພາສີຕໍ່ທັງນາຍຈ້າງ ແລະພະນັກງານ, ເນື່ອງຈາກຄ່າງວດປະກັນໄພ ອາດຖືກຫັກອອກຈາກເງິນຄ່າຈ້າງກ່ອນຫັກພາສີພາຍໃຕ້ກົດໝາຍດ້ານພາສີ ມາດຕາ 125. ເນື່ອງຈາກນາຍຈ້າງຂະໜາດໃຫຍ່

ສ່ວນຫຼາຍມັກໃຫ້ການອຸດໜຸນດ້ານປະກັນໄພສຸຂະພາບ ແກ່ພະນັກງານ, ແລະຍັງຊ່ວຍທຸລະກິດຂະໜາດນ້ອຍໃຫ້ສາມາດແຂ່ງຂັນ ໃນການຊອກເອົາພະນັກງານທີ່ມີຄວາມສາມາດໄດ້ ແລະຈັດຫາຜົນປະ�โยດທີ່ມີຄຸນຄ່າເພື່ອເປັນການສົ່ງເສີມຄວາມຈົງຮັກພັກດີ ແລະກຳລັງໃຈຂອງພະນັກງານດ້ວຍ.

ແຜນສຸຂະພາບສຳລັບພະນັກງານ

ໂດຍຜ່ານໂຄງການ SHOP ຂອງ Covered California, ພະນັກງານຈະສາມາດເຂົ້າເຖິງແຜນປະກັນໄພສຸຂະພາບທີ່ຫຼາກຫຼາຍຊຶ່ງອີງໃສ່ ການຕັດສິນໃຈຂອງນາຍຈ້າງ ແລະເກນທີ່ເຂົາເຈົ້າວາງໄວ້.

ການຕັດສິນໃຈໜຶ່ງໃນຫຼາຍອັນທີ່ນາຍຈ້າງທີ່ເລືອກທີ່ຈະຄຸ້ມຄອງພະນັກງານຂອງຕົນ ຈະຕ້ອງເຮັດແມ່ນລະດັບຂອງການຄຸ້ມຄອງ. ເພື່ອຊ່ວຍນາຍຈ້າງເຮັດການຕັດສິນໃຈ, ໂດຍເລີ່ມຕັ້ງແຕ່ໃນປີ 2014 ແຜນປະກັນໄພສຸຂະພາບທຸກແຜນຈະຖືກຈັດປະເພດ ເຂົ້າຢູ່ໃນໜຶ່ງໃນສີ່ລະດັບດັ່ງນີ້: ທອງແດງ, ເງິນ, ຄຳ ແລະຄຳຂາວ.

ລະດັບໃໝ່ເຫຼົ່ານີ້ແມ່ນເຮັດໃຫ້ບັນດານາຍຈ້າງສາມາດທີ່ຈະປຽບທຽບແຜນປະກັນໄພ ທີ່ແຕກຕ່າງກັນໄດ້ຢ່າງງ່າຍດາຍໃນແຕ່ລະປະເພດ. ມີການອອກແບບລະດັບຕ່າງໆ ຂອງປະກັນໄພເນື່ອງຈາກປະເພດຂອງໂລຫະມີຄຸນຄ່າເພີ່ມ, ດັ່ງນັ້ນເປີເຊັນຂອງຄ່າ ໃຊ້ຈ່າຍດ້ານການປິ່ນປົວທີ່ແຜນປະກັນໄພສຸຂະພາບຈະຄຸ້ມຄອງໃຫ້ນັ້ນກໍຈະເພີ່ມຂຶ້ນ ດ້ວຍ. ນາຍຈ້າງສາມາດເລືອກເອົາແຜນທີ່ມີຄ່າງວດປະກັນໄພສູງກວ່າ ແຕ່ມີຄ່າໃຊ້ຈ່າຍ ຕ່ຳກວ່າໃນເວລາໄປຮັບການປິ່ນປົວໄດ້, ເຊັ່ນ ແຜນລະດັບຄຳຂາວ ຫຼື ຄຳ. ຫຼື ນາຍຈ້າງສາມາດເລືອກເອົາແຜນທີ່ມີຄ່າງວດປະກັນໄພຕ່ຳກວ່າ ແຕ່ມີຄ່າໃຊ້ຈ່າຍສູງກວ່າ ໃນເວລາໄປຮັບການປິ່ນປົວ, ເຊັ່ນ ແຜນລະດັບເງິນ ຫຼື ທອງແດງ. ການຕັດສິນໃຈນັ້ນ ແມ່ນຂຶ້ນຢູ່ກັບນາຍຈ້າງແຕ່ລະຄົນ.

ນອກຈາກນີ້ ບັນດານາຍຈ້າງຍັງຕັດສິນໄດ້ວ່າ ຈະສະເໜີການຄຸ້ມຄອງໃຫ້ແກ່ ຜູ້ຢູ່ພາຍໃຕ້ການດູແລຂອງພະນັກງານ, ແລະປະກອບ ສ່ວນຈ່າຍສົມທົບ ເຂົ້າໃນຄ່າງວດສຳລັບຜູ້ຢູ່ໃຕ້ການດູແລ ຫຼືບໍ່ ຊຶ່ງມັນແມ່ນທາງເລືອກ. ຖ້າຫາກ ນາຍຈ້າງເລືອກທີ່ຈະບໍ່ສະເໜີ ການຄຸ້ມຄອງໃຫ້ແກ່ຜູ້ຢູ່ໃຕ້ການດູແລຂອງພະນັກງານ, ເຂົາເຈົ້າກໍສາມາດຊຸກຍູ້ໃຫ້ພະນັກງານຂອງເຂົາເຈົ້າຕິດຕໍ່ຫາ Covered California ເພື່ອຊື້ການຄຸ້ມຄອງໃຫ້ແກ່ບຸກຄົນສຳລັບສະມາຊິກໃນຄອບຄົວຂອງພະນັກງານ.

ທາງເລືອກໃໝ່ສຳລັບການຄຸ້ມຄອງຂອງແຜນປະກັນໄພ ແລະໜ້າຕື່ນເຕັ້ນຫຼາຍຢ່າງ ສຳລັບທຸລະກິດຂະໜາດນ້ອຍ. ໂຄງການ SHOP ຂອງ Covered California ສາມາດຊ່ວຍນາຍຈ້າງຊອກພົບແຜນປະກັນໄພສຸຂະພາບທີ່ເໝາະສົມກັບເຂົາເຈົ້າແລະ ພະນັກງານຂອງເຂົາເຈົ້າໄດ້.

ການແກ້ໄຂທາງອອກທີ່ງ່າຍຂຶ້ນ, ທາງເລືອກທີ່ຫຼາກຫຼາຍ

ໂຄງການ SHOP ຂອງ Covered California ຈະ ຊ່ວຍບັນດາເຈົ້າຂອງທຸລະກິດໃນການຈັດຫາການປະກັນ ໄພໃນລາຄາຍ່ອມເຍົາໃຫ້ແກ່ພະນັກງານຂອງເຂົາເຈົ້າ ແລະເຮັດໃຫ້ການບໍລິຫານງ່າຍຂຶ້ນ.

ການປຽບທຽບງ່າຍ. Covered California ໃຫ້ທ່ານປຽບທຽບແລະເຫັນຄວາມແຕກຕ່າງ ກັນຂອງແຜນປະກັນໄພສຸຂະພາບຕ່າງໆ ທີ່ສະໜອງໂດຍຜູ້ປະກັນໄພເອກະຊົນ. ທຸກສິ່ງຢ່າງທີ່ ນາຍຈ້າງຕ້ອງການມີຢູ່ທາງອິນເຕີເນັດ, ທາງໂທຣະສັບ ຫຼື ມີຜູ້ຕາງໜ້າທີ່ຜ່ານການຮັບຮອງຂອງ Covered California ໄປພົບດ້ວຍຕົນເອງ.

ຄ່າໃຊ້ຈ່າຍທີ່ສາມາດຄາດເດົາໄດ້. ບໍ່ກ່ຽວກັບວ່າພະນັກ ງານຈະເລືອກເອົາແຜນປະກັນໄພໃດ, ເງິນສົມທົບ ຄ່າງວດປະກັນໄພທີ່ເຈົ້າຂອງ ທຸລະກິດຈະຕ້ອງຈ່າຍນັ້ນ ແມ່ນຄືເກົ່າ, ຊຶ່ງຊ່ວຍໃຫ້ບັນດານາຍຈ້າງສາມາດ ຄາດເດົາ ແລະຈັດການງົບປະມານດ້ານປະກັນໄພ ສຸຂະພາບ ໄດ້.

ການບໍລິຫານທີ່ງ່າຍດາຍ. ໂຄງການ SHOP ຂອງ Covered California ຈະເຮັດໃຫ້ນາຍຈ້າງສາມາດ ຈ່າຍຄ່າປະກັນໄພໄດ້ຢ່າງງ່າຍດາຍ. ເຖິງແມ່ນວ່າ ເມື່ອ ພະນັກງານເລືອກເອົາແຜນປະກັນໄພທີ່ແຕກຕ່າງກໍຕາມ, ນາຍຈ້າງຈະຈ່າຍເງິນງວດດຽວໃຫ້ແກ່ Covered California. Covered California ຈະແຈກຢາຍ ການຈ່າຍເງິນຄ່າງວດປະກັນໄພທີ່ເໝາະສົມໃຫ້ແກ່ບໍລິສັດ ປະກັນໄພສຸຂະພາບຂອງ Covered California ແຕ່ລະແຫ່ງທີ່ຄຸ້ມຄອງພະນັກງານ.

Covered California ຍັງຈະເຮັດໃຫ້ມັນງ່າຍສຳລັບ ນາຍຈ້າງທີ່ຈະສືບຕໍ່ເຮັດວຽກປະສານງານກັບຜູ້ຕາງ ໜ້າຂອງບໍລິສັດປະກັນໄພ ປັດຈຸບັນຂອງເຂົາເຈົ້າ, ຊຶ່ງຜູ້ຕາງໜ້ານັ້ນໄດ້ຮັບການຝຶກອົບຮົມມາແລ້ວແລະໄດ້ ຮັບການຮັບຮອງໂດຍ Covered California. ສະເພາະຜູ້ຕາງໜ້າທີ່ຜ່ານການຮັບຮອງຂອງ Covered California ເທົ່ານັ້ນທີ່ຈະໄດ້ຮັບອະນຸຍາດໃຫ້ສາມາດ ໃຫ້ການປຶກສາ ແລະສະໜອງການສະໜັບສະໜູນດ້ານ ການລົງທະບຽນໃຫ້ແກ່ນາຍຈ້າງໄດ້. ເຈົ້າຂອງທຸລະກິດ ຂະໜາດນ້ອຍຄວນຊຸກຍູ້ຜູ້ຕາງໜ້າຂອງຕົນໃຫ້ຜ່ານ ການຮັບຮອງຈາກ Covered California, ຖ້າຫາກວ່າ ເຂົາເຈົ້າຍັງບໍ່ຜ່ານການຮັບຮອງເທື່ອ.

ນາຍຈ້າງເປັນຜູ້ຄວບຄຸມ. ນາຍຈ້າງຈະເປັນ ຜູ້ຕັດສິນວ່າຈະເຂົ້າຮ່ວມໃນ Covered California ຫຼືບໍ່ແລະເມື່ອໃດ. ນາຍຈ້າງເປັນຜູ້ ເລືອກລະດັບການຄຸ້ມຄອງ, ຈຳນວນເງິນທີ່ຈະ ປະກອບສ່ວນສົມທົບຈ່າຍເຂົ້າໃນຄ່າງວດປະກັນໄພ ຂອງພະນັກງານ ແລະ, ຖ້າຫາກວ່າມີ ການ ຄຸ້ມຄອງສຳລັບຜູ້ຢູ່ໃຕ້ການດູແລຂອງພະນັກງານ, ຕ້ອງມີການຈ່າຍຈຳນວນເງິນສົມທົບໃດໆ ຫຼືບໍ່ສຳລັບ ຄ່າງວດປະກັນໄພຂອງຜູ້ຢູ່ໃຕ້ການດູແລຂອງພະນັກ ງານ. ເມື່ອນາຍຈ້າງຕັດສິນໃຈເລື່ອງເຫຼົ່ານີ້ໄດ້ແລ້ວ, ຈາກນັ້ນ ພະນັກງານກໍຈະເລືອກເອົາແຜນທີ່ເໝາະສົມ ກັບຄວາມຕ້ອງການ, ງົບປະມານ ແລະຮູບແບບການ ໃຊ້ຊີວິດຂອງເຂົາເຈົ້າຫຼາຍທີ່ສຸດ.

ສຳລັບຂໍ້ມູນເພີ່ມເຕີມ,
ຢ້ຽມຊົມເວັບໄຊ www.CoveredCA.com
ຫຼື ໂທຣ (877) 453-9198.

COVERED CALIFORNIA

CoveredCA.com

Covered California ແມ່ນ "ຕະຫຼາດປະກັນໄພ" ໃໝ່ທາງ ອອນລາຍທີ່ຈະເຮັດໃຫ້ການຊື້ປະກັນໄພງ່າຍຂຶ້ນ ແລະມີ ລາຄາຍ່ອມເຍົາເພື່ອໃຫ້ສາມາດຊື້ປະກັນໄພສຸຂະພາບທີ່ມີ ຄຸນນະພາບ ແລະຮັບເອົາການຊ່ວຍເຫຼືອທາງການເງິນເພື່ອ ຊ່ວຍຈ່າຍຄ່າປະກັນໄພນັ້ນ.

ເວີຊັ່ນ: ສິງຫາ 2013